ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

<u>ກະຊວງການເງິນ</u>

<u>ກົມພາສີ</u>

ເລກທີ: 02778/ກພສ

ນະຄອນຫຼວງວຽງຈັນ, ວັນທີ: 31 MAY 2018

# ບົດແນະນຳ

## ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2017 (ASEAN Harmonized Tariff Nomenclature ~ AHTN 2017)

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20/12/2011 ແລະ ກົດໝາຍວ່າດ້ວຍພາສີ ສະບັບປັບປຸງບາງມາດຕາ ສະບັບ ເລກທີ 57/ສພຊ, ລົງວັນທີ 16/01/2014;
- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ສະບັບເລກທີ 2826/ກງ, ລົງວັນທີ 22 ສິງຫາ 2017 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມພາສີ;
- ອີງຕາມ ແຈ້ງການຂອງກະຊວງການເງິນ ເລກທີ 1434/ກງ, ລົງວັນທີ 14/05/2018 ວ່າດ້ວຍ ການຈັດຕັ້ງປະຕິບັດ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017).

ເພື່ອເປັນການຜັນຂະຫຍາຍເນື້ອໃນແຈ້ງການຂອງກະຊວງການເງິນ ສະບັບເລກທີ 1434/ກງ ໃຫ້ມີປະສິດທິພາບແລະເປັນເອກະພາບກັນໃນຂອບເຂດທົ່ວປະເທດ ແລະ ພ້ອມທັງໃຫ້ສອດຄ່ອງກັບລະບຽບການຂອງສາກົນ,

## ກົມພາສີຈຶ່ງອອກບົດແນະນຳ ດັ່ງນີ້:

1. ໃຫ້ປ່ຽນແທນ ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2012 (AHTN 2012) ທີ່ກຳລັງນຳໃຊ້ຢູ່ໃນປະຈຸບັນດ້ວຍ **ສາລະບານສິນຄ້າລະບົບເອກະພາບອາຊຽນ ລຸ້ນປີ 2017 (AHTN 2017)**;

2. AHTN 2017 ປະກອບດ້ວຍ 21 ພາກ, 97 ໝວດ, 1,222 ເຄົ້າ, 5,387 ລະຫັດຍ່ອຍ 6 ຕົວເລກ, 10,813 ລະຫັດຍ່ອຍ 8 ຕົວເລກ ແລະ 11,429 ລະຫັດຍ່ອຍ 10 ຕົວເລກ ສຳລັບກຳນົດ ອັດຕາພາສີຂາເຂົ້າ ແລະ ອັດຕາອາກອນຊົມໃຊ້ (ຖ້າມີ). ໃນຈຳນວນນີ້ 13 ລະຫັດແມ່ນເປັນລາຍການສິນຄ້າ 'ຫ້າມນຳເຂົ້າ (Prohibited Items)';

3. ໃນ AHTN 2017 ມີ 03 ລະຫັດເຄົ້າ ໄດ້ຖືກຍຸບໄປລວມກັບລະຫັດອື່ນໆ ຄື:
   - 38.24 (ຜະລິດຕະພັນເຄມີທີ່ບໍ່ໄດ້ລວມຫຼືລະບຸຢູ່ບ່ອນອື່ນ);
   - 69.08 (ກະໂລ້ເຄືອບເຫຼື້ອມ);
   - 84.79 (ເຄື່ອງຈັກພິມດີດ);

   ມີ 01 ລະຫັດເຄົ້າ ຄື:
   - 96.20 (ຂາຕັ້ງອຸກອນ ລວມທັງກ້ານເຊວຟີ້) ຖືກເພີ່ມເຂົ້າໃໝ່;

4. ໃນລະດັບລະຫັດຍ່ອຍ 6 ຕົວເລກ ໄດ້ມີການເພີ່ມຂຶ້ນທັງໝົດ 80 ລະຫັດ. ໃນນີ້, ໂຕທີ່ພົ້ນເດັ່ນແມ່ນ ການເພີ່ມ 01 ລະຫັດ ສໍາລັບດອກໄຟ LED (Light-Emitting Diode), 07 ລະຫັດ ສໍາລັບພາຫະນະໄຮບຣິດ (Hybrid) ໃນ ໝວດ 87.02 ແລະ 87.03, 05 ລະຫັດ ສໍາລັບໝວດ 96.20;

5. ຫຼັກການໃນການຈັດລະຫັດສິນຄ້າແມ່ນໃຫ້ອີງໃສ່ຫຼັກການຕີຄວາມໝາຍລະຫັດສິນຄ້າ (General Interpretative Rules for classification ~ GIRs) ປະກອບມີ 6 ຫຼັກການ ທີ່ລະບຸຢູ່ດ້ານໜ້າຂອງປຶ້ມສາລະບານ ລະບົບເອກະພາບ ລຸ້ນປີ 2017;

6. ໂດຍອີງໃສ່ຫຼັກການຕີຄວາມໝາຍລະຫັດສິນຄ້າ (GIRs), ໃຫ້ເອົາໃຈໃສ່ການຈັດລະຫັດສິນຄ້າສໍາລັບບາງ ປະເພດສິນຄ້າທີ່ຂ້ອນຂ້າງສັບສົນ ດັ່ງຕໍ່ໄປນີ້:
   - ➢ ການຈັດລະຫັດສິນຄ້າປະເພດ ກາເຟ ແລະ ເຄື່ອງດື່ມທີ່ມີທາດກາເຟເປັນຫຼັກ ໃຫ້ປະຕິບັດດັ່ງນີ້:
     - ກາເຟເປັນເມັດ ແມ່ນຈັດໃນໝວດ 09.01;
     - ກາເຟຜົງສໍາເລັດຮູບ 100% (Instant Coffee) ແມ່ນຈັດໃນໝວດ 21.01 (2101.11);
     - ກາເຟຜົງສໍາເລັດຮູບແບບຜະສົມ (2IN1, 3IN1,...) ແມ່ນຈັດໃນໝວດ 21.01 (2101.12);
     - ເຄື່ອງດື່ມກາເຟສໍາເລັດຮູບ ແມ່ນຈັດໃນໝວດ 22.02 (2202.90);
   - ➢ ການຈັດລະຫັດສິນຄ້າຄ້າປະເພດ ພາຫະນະກົນຈັກໜັກ ແລະ ພາຫະນະຂົນສົ່ງ ໃຫ້ປະຕິບັດດັ່ງນີ້:
     - ປະເພດ ລົດດູດ, ລົດຕັກ, ລົດເກຣດ, ລົດໂລ, ... ແມ່ນຈັດໃສ່ໃນໝວດ 84.29 ໂດຍອີງຕາມ ຊະນິດຂອງ ພາຫະນະກົນຈັກໜັກນັ້ນໆ;
     - ປະເພດ ລົດໄຖນາເດີນຕາມ, ລົດແທຣັກເຕີ ແລະ ລົດຫົວລາກ ແມ່ນຈັດໃສ່ໃນໝວດ 87.01 ໂດຍອີງ ຕາມ ຊະນິດຂອງລົດ;
     - ປະເພດ ລົດຕູ້ທີ່ມີບ່ອນນັ່ງແຕ່ 10 ຄົນຂຶ້ນໄປລວມທັງຄົນຂັບ ແມ່ນໃຫ້ຈັດໃສ່ໃນໝວດ 87.02 ໂດຍອີງ ຕາມຊະນິດຂອງພະລັງງານທີ່ໃຊ້, ນໍ້າໜັກລວມ (Goss Vehicle Weight ~ GVW*) ແລະ ຈໍານວນບ່ອນ ນັ່ງ (ທີ່ມີສາຍແອວນິລະໄພ);
     - ປະເພດ ລົດສໍາລັບຂັບຂີ່ສ່ວນບຸກຄົນ (ລົດເກງ, ລົດຈີບ, ລົດຕູ້ບໍ່ເກີນ 9 ບ່ອນນັ່ງ,...), ພາຫະນະຮັບໃຊ້ ວິຊາສະເພາະບາງປະເພດ (ລົດໂຮງໝໍ, ລົດຂົນນັກໂທດ, ລົດຂົນສົບ,...), ລົດໂກກາດ (Go-Kart), ລົດຈັກ 4 ລໍ້ (ATV), ລົດໃຊ້ຕາມສະໜາມກ໊ອຟ (Golf-Cart), ... ແມ່ນ ໃຫ້ຈັດໃສ່ໃນໝວດ 87.03 ໂດຍອີງຕາມຊະນິດຂອງພະລັງງານທີ່ໃຊ້ ແລະ ຂະໜາດຂອງກະບອກສູບ (CC);
     - ປະເພດລົດກະບະ, ລົດບັນທຸກທຸກປະເພດ (ລົດດໍາມ, ລົດສະແຕັກ, ລົດຂົນຂີ້ເຫຍື້ອທີ່ມີອຸປະກອນ ອັດຂີ້ເຫຍື້ອຕິດມານໍາ,...) ແມ່ນໃຫ້ຈັດໃສ່ໃນໝວດ 87.04 ໂດຍອີງຕາມຊະນິດຂອງພະລັງງານທີ່ໃຊ້ ແລະ GVW *ຕາມສະເປັກຂອງໂຮງງານ ຫຼື ຜູ້ຜະລິດ***;
       **ຫ້າມນໍາລົດບັນທຸກໄປຊັ່ງເພື່ອກໍານົດ ນໍ້າໜັກລົດເປົ່າແລະ/ຫຼືຂະໜາດບັນທຸກ ເພື່ອໃຊ້ໃນການແຈ້ງ ພາສີເປັນລາຍລະອຽດ!
     - ປະເພດລົດຮັບໃຊ້ວິຊາສະເພາະ (ລົດເຄຣນ, ລົດດັບເພີງ, ລົດຄລີນິກເຄື່ອນທີ່, ລົດກວາດ-ລ້າງຖະໜົນ, ...) ແມ່ນຈັດໃສ່ໃນໝວດ 87.05;
     - ປະເພດ ຫາງລາກ (Trailer / Semi-Trailer) ແມ່ນໃຫ້ຈັດໃສ່ໃນລະຫັດເກົ້າ 87.16.

7. ມອບໃຫ້ ພະແນກຂໍ້ມູນຂ່າວສານ ແລະ ແຜນການ ໂດຍສົມທົບກັບ ພະແນກນິຕິກໍາ ເປັນເຈົ້າການໃນການນໍາ AHTN 2017 ຮັບໃຊ້ເຂົ້າໃນລະບົບແຈ້ງພາສີອັດຕະໂນມັດ (ASYCUDA) ໃຫ້ທັນເວລາ;

8. ມອບໃຫ້ ພະແນກນິຕິກຳ ໂດຍສົມທົບກັບ ພະແນກ ຈັດຕັ້ງ, ບໍລິຫານ ແລະ ການເງິນ ແລະ ພະແນກອ່ອນມື ພາສີສາກົນ ໃນການດຳເນີນການຝຶກອົບຮົມກ່ຽວກັບ AHTN 2017 ໃຫ້ແກ່ເຈົ້າໜ້າທີ່ພາສີ, ຜູ້ປະກອບການ, ຂະແໜງການທີ່ກ່ຽວຂ້ອງ ແລະ ຜູ້ທີ່ສົນໃຈທົ່ວໄປ;

9. ມອບໃຫ້ ພະແນກນິຕິກຳ ປະສານກັບ ຫ້ອງການກອງເລຂາອຳນວຍຄວາມສະດວກທາງດ້ານການຄ້າ (ກະຊວງອຸດສາຫະກຳແລະການຄ້າ) ເພື່ອເຜີຍແຜ່ AHTN 2017 ຜ່ານທາງ ເວັບໄຊດ໌ຂໍ້ມູນຂ່າວສານການຄ້າ (www.laotradeportal.gov.la);

10. ມອບໃຫ້ ບັນດາພະແນກການອ້ອມຂ້າງກົມພາສີ, ກອງຄຸ້ມຄອງພາສີ ແລະ ດ່ານພາສີຊາຍແດນໃນຂອບເຂດທົ່ວປະເທດເອົາໃຈໃສ່ເຜີຍແຜ່ ແລະ ໃຫ້ຄຳແນະນຳກ່ຽວກັບ ບົດແນະນຳສະບັບນີ້ໃຫ້ຜູ້ປະກອບການຊາບ ແລະເຂົ້າໃຈ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເປັນເອກະພາບກັນ;

11. ການຈັດຕັ້ງປະຕິບັດ AHTN 2017 ແມ່ນນັບແຕ່ວັນທີ 01/07/2018 ເປັນຕົ້ນໄປ.

12. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບບັນຫາຫຍຸ້ງຍາກ ໃຫ້ນຳສະເໜີກົມພາສີ ເພື່ອຄົ້ນຄວ້າແກ້ໄຂຕາມກົດໝາຍແລະລະບຽບການ ແລະ ທັນກັບສະພາບການ.

ດັ່ງນັ້ນ, ຈຶ່ງອອກບົດແນະນຳມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

<u>ຮັກສາການຫົວໜ້າກົມພາສີ</u>

ກະຊວງ ການເງິນ ກົມພາສີ

ບຸນປະເສີດ ສີກຸນລະບຸດ

<u>ໝາຍເຫດ:</u> *GVW = ນໍ້າໜັກລົດເປົ່າ (ຕາມສະເປັກຂອງຜູ້ຜະລິດ) + ຂະໜາດບັນທຸກ (ຕາມສະເປັກຂອງຜູ້ຜະລິດ)

<u>ບ່ອນສົ່ງ:</u>

| | |
|---|---|
| - ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ | 01 ສະບັບ ເພື່ອໃຊ້ຕາງລາຍງານ ; |
| - ຫ້ອງການກະຊວງການເງິນ | 01 ສະບັບ ເພື່ອໃຊ້ຕາງລາຍງານ; |
| - ພະແນກອ້ອມຂ້າງກົມພາສີ ພະແນກລະ | 01 ສະບັບ ເພື່ອຊາບແລະຈັດຕັ້ງປະຕິບັດ; |
| - ກອງຄຸ້ມຄອງພາສີ ກອງລະ | 01 ສະບັບ ເພື່ອຊາບແລະຈັດຕັ້ງປະຕິບັດ; |
| - ດ່ານພາສີສາກົນໃນຂອບເຂດທົ່ວປະເທດ ດ່ານລະ | 01 ສະບັບ ເພື່ອຊາບແລະຈັດຕັ້ງປະຕິບັດ; |
| - ເກັບມ້ຽນທີ່ກົມພາສີ | 01 ສະບັບ ເພື່ອສຳເນົາ. |